**ສະໜັບສະໜູນ 870 ໂຄງການຕໍ່ຕ້ານຄວາມທຸກຍາກຢູ່ 70 ປະເທດ, ເພື່ອປະຊາກອນມາກກ່ວາ 45 ລ້ານຄົນ**

# overland-underwater.com

ເຖິງບັນດາເພື່ອນທີ່ຮັກແພງທັງຫລາຍ

ຊີວິດການເປັນຢູ່ຂອງປະຊາກອນໃນທົ່ວໂລກນັບມື້ນັບຫລາຍຂື້ນທີ່ໄດ້ຮັບການແກ້ໄຂໃຫ້ດີຂື້ນໂດຍຜ່ານການປະຕິບັດໂຄງການຕ່າງໆ ຂອງອົງການແຄຣ໌ ອິນເທີແນເຊີແນວ (CARE International) ເຊິ່ງເປັນອົງການທີ່ມີເປົ້າໝາຍເພື່ອຮັບໃຊ້ທັງພາກສ່ວນບຸກຄົນ ແລະຄອບຄົວທີ່ຢູ່ໃນເຂດຊຸມຊົນທີ່ຕົກຢູ່ໃນຄວາມທຸກຈົນຢູ່ໃນທຸກແຫ່ງຫົນຂອງໂລກ.

ເພື່ອເປັນການຊ່ວຍໃນການປຸກລະດົມກ່ຽວກັບງານສຳຄັນດັ່ງກ່າວເຊິ່ງຢູ່ພາຍໃຕ້ອົງການ ແຄຣ໌ ອິນເທີແນເຊີແນວນີ້ ໜ່ວຍງານເຄື່ອນທີ່ທັງບົກແລະນ້ຳກຳລັງຈະອອກເດີນທາງຈາກຣາຊອານາຈັກອັງກິດໄປຍັງປະເທດນິວຊີແລນໂດຍສ່ວນມາກແມ່ນຈະໄປຕາມເສັ້ນທາງບົກທີ່ເຫັນວ່າຈະເດີນໄປໄດ້. ນີ້ແມ່ນຄວາມຕັ້ງໃຈຂອງພວກ ເຮົາທີ່ຢາກຈະຂໍປຸກລະດົມທຶນໂດຍຜ່ານການບໍຣິຈາກ, ການໃຫ້ການປະກັນແລະການອຸບປະຖັມໃຫ້ແກ່ອົງການແຄຣ໌ ອິນເທີແນເຊີແນວ.

ພວກເຮົາຈະເດີນຜ່ານເສັ້ນທາງ 65,000 ກິໂລແມັດ,ໂດຍຈະມີການຢ້ຽມຢາມ 26 ປະເທດຢູ່ໃນ 4 ທະວີບເຊິ່ງມີຄວາມແຕກຕ່າງກັນທາງດ້ານອຸນຫະພູມອາກາດອັນມີຄວາມຈັດແຕ່ +40 ອົງສາຢູ່ເຂດທະເລຊາຍໄປເຖິງ -20 ອົງສາ ຢູ່ໃນເຂດຕາເວັນອອກກາງ, ເພາະວ່າພວກເຮົາຈະເດີນຜ່ານພູເຂົາຫິມມະໄລແລະຈະຂີ່ຣົຖຜ່ານເຂດພາຫີນ, ທະເລຊາຍ, ເຂດດິນຕົມແລະເຂດຫິມມະແລະເດີນຜ່ານທາງດີເປັນບາງໂອກາດ!

*ການອອກເດີນທາງສຳຫລວດຄັ້ງນີ້ແມ່ນຢູ່ໃນການຊ່ວຍເຫລືອຂອງອົງການແຄຣ໌ ອິນເທີແນເຊີແນວເຊິ່ງໜ່ວຍງານເອງເປັນຜູ້ລົງທຶນສະໜັບສະໜູນທັງໝົດ ໃຫ້ແກ່ ການເດີນທາງດັ່ງກ່າວ.*

ພວກຂ້າພຣະເຈົ້າຈະອອກຈາກຣາຊອານາຈັກອັງກິດໃນຕົ້ນເດືອນສິງຫາ 2005 ແລະຈະໄປຮອດປະເທດນິວຊີແລນແລະຈະໃຊ້ເວລາຢູ່ 18 ເດືອນ ຈິ່ງຈະເຖິງຈຸດໝາຍ. ພວກຂ້າພຣະເຈົ້າຢາກຈະປຸກລະດົມໃຫ້ຮູ້ກ່ຽວເລື້ອງຂອງອົງການແຄຣ໌ ອິນເທີແນເຊີແນວແລະຈະໄປຢ້ຽມຢາມໂຄງການຈຳນວນໜຶ່ງຂອງອົງການດັ່ງກ່າວຕາມເສັ້ນທາງທີ່ເດີນຜ່ານນັ້ນ.

ເພື່ອຈະຮູ້ຂໍ້ມູນລະອຽດກ່ວານີ້ກ່ຽວກັບການເດີນທາງສຳຫລວດຂອງພວກເຮົາແລະຂ່າວຄືບໜ້າກ່ຽວກັບການເດີນທາງຂອງພວກເຮົາໄປຍັງປະເທດນິວຊີແລນນັ້ນ ກະຣຸນາໃຫ້ບັນດາທ່ານໄດ້ເປີດເບິ່ງແວບຊາຍຕ໌ຂອງພວກເຮົາດັ່ງນີ້: www.overland-underwater.com ທ່ານຍັງສາມາດທີ່ຈະໃຫ້ການບໍຣິຈາກໄດ້ຢ່າງປອດພັຍໄດ້ ໂດຍຜ່ານການຕິດຕໍ່ກັບແວບຊາຍຕ໌ຂອງພວກເຮົາຫລືວ່າ ດາວຫລອດເອົາເອກະສານຕົວຢ່າງເພື່ອໃຫ້ການປະກັນ/ການໃຫ້ການອຸບປະຖັມ ແລະສົ່ງການບໍຣິຈາກຂອງທ່ານໄປຍັງອົງການ ແຄຣ໌ ອິນເທີແນເຊແນວ.

**ເສັ້ນທາງທີ່ຈະຜ່ານໄປ:**

ຣາຊອານາຈັກອັງກິດ - ຝຣັ່ງເສດ - ອີຕາລີ - ຊະໂລວຽນເນຍ - ໂກຣເອເຊຍ - ເຊີຣ໌ເບຍ & ມົງຕ໌ - ບູນກາຣີ - ຕວກກີ - ຊີເຣຍ - ຈໍແດນ - ເອຢິບ - ອີຣານ - ປາກິສຖານ - ອິນເດຍ - ເນປານ - ຈີນ - ລາວ - ໄທ - ຟີລິບປິນ - ກຳພູຊາ - ມາເລເຊຍ - ສິງກະໂປ - ອິນໂດເນເຊຍ - ປາປົວ ນິວເກເນຍ - ອອສເຕຣເລຍ - ນິວຊີແລນ

For further information, please see our website: www.overland-underwater.com
Alternatively you can email us at: team@overland-underwater.com

ຊອກຫາ ໂລກແຫ່ງຄວາມຫວັງ, ຄວາມອົດທົນ, ແລະຄວາມເປັນທັມ ທາງດ້ານສັງຄົມເຊິ່ງເປັນບ່ອນທີ່ຄວາມທຸກຈົນໄດ້ຖືກລົບລ້າງໄປ ແລະປະຊາກອນກໍຢູ່ດ້ວຍຄວາມມີ ກຽດສັກສີແລະມີຄວາມປອດພັຍ

## ອົງການແຄຣ໌ ອິນເທີແນເຊແນວປ່ອຍໃຫ້ມີໂອກາດອັນຍາວນານດ້ວຍການ:

ເພີ່ມທະວີຄວາມສາມາດໃນການເພິ່ງຕົນເອງ ~ ໃຫ້ໂອກາດທາງດ້ານເສຖກິດ



ໃຫ້ການບັນເທົາທຸກໃນຍາມສຸກເສີນ ~ ມີນະໂຍບາຍແບບຊັກຈູງໃນການຕັດສິນບັນຫາຢູ່ໃນທຸກລະດັບ



ມີນັກສຶກສາເປັນຈໍານວນ 1 ລ້ານຄົນ, ເຄິ່ງໜຶ່ງໃນນັ້ນເປັນພວກຍິງສາວເຊິ່ງໄດ້ຮັບຜົນປະໂຫຍດຈາກໂຄງການຕ່າງໆ ທີ່ພາໃຫ້ມີການເພີ່ມຈໍານວນຂອງພວກເຂົ້າຮຽນໜັງສືແລະໄດ້ພາກັນຍົກລະດັບຄຸນນະພາບຂອງການສຶກສາໃຫ້ດີຂຶ້ນ.

ມີພວກຜູ້ຊາຍ, ແມ່ຍິງແລະເດັກນ້ອຍຈໍານວນ 7.6 ລ້ານຄົນທີ່ໄດ້ຮັບການຊ່ວຍເຫລືອແບບສຸກເສີນເຊັ່ນ:ອາຫານ, ນໍ້າດື່ມແລະທີ່ພັກອາສັຍ, ຄວາມຕ້ອງການອັນເປັນພື້ນຖານໃນຍາມວິກິຈການກໍໄດ້ຮັບການຕອບສະໜອງ.

ຫລາຍກ່ວາ 7 ລ້ານຄົນໄດ້ຮັບຂໍ້ມູນຂ່າວສານເພື່ອສະກັດກັ້ນການແຜ່ລະບາດຂອງໂຣກເອດອັນເປັນການຫລຸດຜ່ອນ ຄວາມທຸກລໍາບາກເຊິ່ງເປັນວິກິຈການອັນຮ້າຍແຮງຢ່າງໜຶ່ງຂອງມວນມະນຸດໃນຍຸກປັດຈຸບັນ.

ມີຜູ້ເປັນແມ່ແລະເດັກປະມານ 9 ລ້ານຄົນໄດ້ມີໂອກາດໄດ້ຮັບການບໍຣິການທາງດ້ານການແພດທີ່ມີຄຸນນະພາບ, ທໍາໃຫ້ການຖືພາ, ການປະສູງຄັນແລະເດັກຢູ່ໃນວັຍທາຣົກມີຄວາມປອດພັຍມາກຂຶ້ນ.

ມີປະຊາກອນມາກກ່ວາ 6.5 ລ້ານຄົນໄດ້ຮັບການຝຶກອົບຮົມ/ແລະໄດ້ຮັບແຫລ່ງທີ່ມາຂອງການທໍາໃຫ້ທັນຍາຫານຂອງພວກເຂົາດີຂຶ້ນແລະທັງຍັງປ້ອງກັນແຫລ່ງທໍາມະຊາດທີ່ຈະພາໃຫ້ໄປສູ່ການແກ້ໄຂບັນຫາການຂາດແຄນອາຫານຢ່າງໄລຍະຍາວ.

ຫລາຍກ່ວາ 1 ລ້ານຄົນເຊິ່ງມີເຄິ່ງໜຶ່ງຂອງຈໍານວນນັ້ນເປັນແມ່ນຍິງທີ່ໄດ້ຮັບຜົນປະໂຫຍດຈາກໂຄງການຕ່າງໆ ທີ່ໃຫ້ການຝຶກອົບຮົບທາງດ້ານທຸຣະກິດ, ການທໍາໃຫ້ມີລາຍຮັບດີຂຶ້ນແລະການຊ່ວຍປະຊາຊົນໃຫ້ສາມາດ ເລີ່ມການທໍາທຸຣະກິຈຂະໜາດນ້ອຍທີ່ມີຄວາມໝັ້ນຄົງ.

ໂດຍອີງຕາມຈິດໃຈຄວາມມຸ່ງໝັ້ນຂອງພວກຊຸມຊົນທ້ອງຖິ່ນເຫລົ່ານັ້ນ, ອົງການແຄຣ໌ ອິນເທີແນເຊີແນວປະຕິບັດຕາມພາຣະກິຈຂອງພວກຕົນດ້ວຍການມີຄຸນງາມຄວາມດີແລະຄວາມເຫັນອົກເຫັນໃຈຍ້ອນວ່າພວກຄົນທັງຫລາຍທີ່ພວກເຂົາໄດ້ໃຫ້ການບໍຣິການຮັບໃຊ້ນັ້ນກໍສົມຄວນທີ່ຈະໄດ້ຮັບສິ່ງເຫລົ່ານັ້ນຢ່າງບໍ່ນ້ອຍໜ້າ.

CARE International UK,
10-13 Rushworth Street,
London. SE1 0RB. UK.
Tel: +44 (0) 20 7934 9334
Fax: +44 (0) 20 7934 9335
Email: info@ciuk.org
www.careinternational.org.uk
registered charity no. 292506